ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ.....0190.......
ວັນທີ 15 FEB 2018
ໂທລະສັບ 021 217770

ເລກທີ: 008/ທກ

ນະຄອນຫຼວງວຽງຈັນ, ວັນທີ: 14 ກຸມພາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 29/01/2018-02/02/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ້ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,27% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກຍອດຂາຍບ້ານໃໝ່ທີ່ກຳລັງກໍ່ສ້າງ ຂອງເດືອນ 12/2017 ຫຼຸດລົງ 1,8% ຈາກເພີ່ມຂຶ້ນ 0,6%ໃນປີຜ່ານມາ ແລະ ປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງເພີ່ມຂຶ້ນຈຳນວນ 1,95 ລ້ານຄົນ ຂອງອາທິດທີ 20/01/2018 ຈາກ 1,94 ລ້ານຄົນ ໃນອາທິດຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 22-26/01/2018 | ອາທິດນີ້ 29/01/-02/02/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2452 | 1,2486 | -0,27% |
| ເຢນ/ໂດລາ | 109,10 | 109,86 | -0,69% |
| ບາດ/ໂດລາ | 31,34 | 31,38 | -0,13% |
| ເປໂຊ/ໂດລາ | 51,02 | 51,61 | -1,13% |
| ຣູເປັຍ/ໂດລາ | 13.306,00 | 13.448,00 | -1,06% |
| ໂດລາສິງກະໂປ/ໂດລາ | 1,3065 | 1,3127 | -0,47% |
| ຢວນ/ໂດລາ | 6,3200 | 6,2805 | 0,63% |

[1]ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 0,58% ຈາກ 65,66 ໂດລາ/ບາເຣວ ມາເປັນ 66,04 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງ ສ.ອາເມລິກາ ຫຼຸດລົງ 1,98 ລ້ານບາເຣວ ຂອງອາທິດທີ 26/01/2018, ຈາກເພີ່ມຂຶ້ນ 3,10 ລ້ານບາເຣວ ໃນອາທິດຜ່ານມາ[2].
- ສຳລັບລາຄາຄຳຫຼຸດລົງ 0,63% ຈາກ 1.354,36 ໂດລາ/ອອນ ມາເປັນ 1.345,82 ໂດລາ/ອອນ ເນື່ອງຈາກນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ.

## 2.ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,11% ແຕ່ອ່ອນຄ່າລົງ 0,26% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,37% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 3,59% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 26/01/2018 | | | ອາທິດນີ້ 02/02/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[3] | | | | | | | | | | | | |
| ໂດລາ | 8.281,76 | 8.304,67 | 8.291,29 | 8.274,76 | 8.295,00 | 8.281,82 | 0,08% | 0,12% | 0,11% | 0,32% | 0,39% | 0,37% |
| ບາດ | 263,60 | 265,55 | 265,00 | 264,74 | 266,09 | 265,69 | -0,43% | -0,20% | -0,26% | -3,66% | -3,51% | -3,59% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ເພີ່ມຂຶ້ນ 0,13% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 13,81%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,02% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 13,68%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (26/01-01/02/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 17,18 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 41,20 ລ້ານໂດລາ ແລະ ຂາຍໂດລາໄດ້ 24,02 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 386,53 ລ້ານບາດ (ໃນນີ້ຊື້ບາດໄດ້ 287,91 ລ້ານບາດ ແລະ ຂາຍບາດໄດ້ 674,44 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາເພີ່ມຂຶ້ນ 1,70% ແລະ ເງິນບາດເພີ່ມຂຶ້ນ 9,74%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ເງິນໂດລາຈາກທະນາຄານທຸລະກິດຈຳນວນ 10,39 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 10,39 ລ້ານໂດລາສະຫະລັດ ແລະ ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍ.

---

[2]ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 19-25/01/2018 | | ອາທິດນີ້ 26/01-01/02/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **47,40** | **212,74** | **41,20** | **287,91** | **-13,08%** | **35,33%** |
| - ທ/ຄທຸລະກິດລັດ | 21,43 | 82,62 | 17,08 | 127,96 | -20,30% | 54,88% |
| - ທ/ຄທຸລະກິດອື່ນໆ | 25,97 | 130,12 | 24,12 | 159,95 | -7,12% | 22,92% |
| **2. ການຂາຍເງິນຕາຕ່າງປະເທດ** | **16,73** | **664,16** | **24,02** | **674,44** | **43,57%** | **1,55%** |
| - ທ/ຄທຸລະກິດລັດ | 11,11 | 318,26 | 11,40 | 142,23 | 2,61% | -55,31% |
| - ທ/ຄທຸລະກິດອື່ນໆ | 5,62 | 345,90 | 12,62 | 532,21 | 124,56% | 53,86% |
| **ຊື້-ຂາຍສຸດທິທທກ** | **30,67** | **-451,42** | **17,18** | **-386,53** | **-43,98%** | **-14,37%** |
| - ຜົດຕ່ຽງຊື້-ຂາຍ | 64,70% | -212,19% | 41,70% | -134,25% | -35,55% | -36,73% |
| **- ມູນຄ່າການຊື້-ຂາຍ** | **64,13** | **876,90** | **65,22** | **962,35** | **1,70%** | **9,74%** |
| **3.ການຊື້-ຂາຍລະຫວ່າງທຫລກັບ ທທກ** | **5,60** | **0,00** | **10,39** | **0,00** | | |
| - ທຫລຊື້ຈາກທທກ | 5,60 | 0,00 | 10,40 | 0,00 | | |
| - ທຫລຂາຍໃຫ້ທທກ | 0,00 | 0,00 | 0,01 | 0,00 | | |
| **4.ຊື້-ຂາຍລະຫວ່າງທທກດ້ວຍກັນ** | **3,39** | **20,85** | **10,39** | **0,00** | | |
| **5.ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 01/2018 ຄາດວ່າຈະຢູ່ໃນລະດັບ 0,41% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ຫຼຸດລົງ 91,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 2,55 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 25,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 42,88 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 1.052 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 341 ສະບັບ ເທົ່າກັບ 47,96% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 435,49 ຕື້ກີບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 37,98 ຕື້ກີບ ເທົ່າກັບ 9,55% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (26/01-01/02/2018) ມີທັງໝົດ 3.749 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ**: ມີການເຄື່ອນໄຫວຈຳນວນ 3.732 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈຳນວນ 153,16 ຕື້ກີບ ຈາກ 1.133,83 ຕື້ກີບ ມາເປັນ 980,67 ຕື້ກີບ ເທົ່າກັບ 13,5%;
- **ກະຊວງການເງິນ**: ມີການເຄື່ອນໄຫວຈຳນວນ 17 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າຫຼຸດລົງ 165,5 ຕື້ກີບ ຈາກ 209,09 ຕື້ກີບ ມາເປັນ 43,62 ຕື້ກີບ.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 952,98 ຈຸດ ຫຼຸດລົງ ຈາກ 963,43 ຈຸດ ຫຼື ເທົ່າກັບ 1,08% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 1,11 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,29 ຕື້ກີບ ເພີ່ມຂຶ້ນ 483,77% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 42,54% ຂອງມູນຄ່າການ ຊື້-ຂາຍທັງໝົດ.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 154.600 | 888.590.000 | 5.748 | 190.800 | 1.097.590.000 | 5.753 | 23,42 | 23,52 | 5 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 4.200 | 19.250.000 | 4.583 | 923.300 | 4.200.800.000 | 4.550 | 21.883,33 | 21.722,34 | -34 |
| ບໍລິສັດລາວເວີນມະຫາຊົນ | - | - | 5.000 | - | - | 5.500 | - | - | 500 |
| ບໍລິສັດປີໂຕລ້ຽມເທລດຖິ້ງລາວມະຫາຊົນ | - | - | 2.000 | 600 | 1.150.000 | 1.917 | - | - | -83 |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | - | - | 1.550 | 100 | 160.000 | 1.600 | - | - | 50 |
| ທັງໝົດ | 158.800 | 907.840.000 | | 1.114.800 | 5.299.700.000 | | 602,02 | 483,77 | |

3. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາວຽກງານຕ່າງໆ: ❶ ກອງປະຊຸມທະວິພາຄີລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງ ມຽນມາ ທີ່ (ໂຮງແຮມລາວພາຊາ), ❷ ກອງປະຊຸມເຜີຍແຜ່ເຊື່ອມຊຶມນິຕິກຳກ່ຽວ ກັບວຽກງານກໍ່ສ້າງພັກ-ພະນັກງານ ທີ່ (ຫໍປະຊຸມແຫ່ງຊາດ), ❸ ກອງປະຊຸມປຶກສາຫາລືຜ່ານເນື້ອໃນຮ່າງແຜນຈັດຕັ້ງປະຕິບັດ ການເຂົ້າເຖິງການບໍລິການທາງດ້ານການເງິນ ສຳລັບທະນາຄານ ແຫ່ງ ສປປ ລາວ ໄລຍະ 5 ປີ (2016-2020) ທີ່ (ທຫລ), ❹ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງກົດໝາຍວ່າດ້ວຍ ທຫລ ທີ່ (ກະຊວງຍຸຕິທຳ), ❺ ກອງປະຊຸມປຶກສາຫາລືກ່ຽວກັບກົນໄກການໂອນໜີ້ເງິນກູ້ ທີ່ ທະນາຄານແຫ່ງ ສປປ ລາວ ປ່ອຍຜ່ານທະນາຄານສົ່ງເສີມກະສິກຳ ໄປໃຫ້ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້, ❻ ກອງປະຊຸມຄະນະສະເພາະກິດແກ້ໄຂກໍລະນີເຈົ້າໜ້າທີ່ພາສີໄທຢູ່ຂົວມິດຕະພາບໄທ-ລາວແຫ່ງທີ 1 ຍຶດເງິນ 98 ລ້ານບາດ ທີ່ (ກົມຕຳຫຼວດເສດຖະກິດ), ❼ ກອງປະຊຸມກ່ຽວກັບການປະເມີນຄວາມສ່ຽງແຫ່ງຊາດ ຂອງແຕ່ລະອະນຸກຳມະການ ທີ່ (ທຫລ), ❽ ກອງປະຊຸມປຶກສາຫາລືກ່ຽວກັບວຽກງານຕ້ານການຟອກເງິນ ທີ່ (ສະຖານທູດອັງກິດ), ❾ ສຳມະນາໃນຫົວຂໍ້: "ການພັດທະນາໂຄງລ່າງພື້ນຖານຂອງລະບົບຊຳລະຂ້າມແດນ (Cross border settlement Forum)" ທີ່ (ປະເທດກຳປູເຈຍ).

**III.ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາແລະອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທີ່ວລະບົບ;
- **ກະກຽມຈັດກອງປະຊຸມ:** ❶ ກອງປະຊຸມຄະນະສະເພາະກິດຂອງລັດຖະບານ ໃນການແກ້ໄຂບັນຫາບໍລິສັດ ພີເອັສສົ່ງເສີມກະສິກໍາ ແລະ ອຸດສາຫະກໍາ ຄົບວົງຈອນ ຂາອອກ-ຂາເຂົ້າ ທີ່ (ທຫລ), ❷ ກອງປະຊຸມສ່ອງແສງວຽກງານສາຍພັກ-ລັດ ປະຈໍາເດືອນ ມັງກອນ 2018 ທີ່ (ທຫລ), ❸ ກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດການອ່າຍໜີ້ 3 ແຈ ໂຄງການລົງທຶນຂອງລັດ ທີ່ (ທຫລ), ❹ ກອງປະຊຸມປຶກສາຫາລືກ່ຽວກັບ ວຽກງານການໂອນເງິນຂ້າມທະນາຄານດ້ວຍຕູ້ ATM ກັບບັນດາສະມະຊິກ LAPS, ❺ ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບກະກຽມເນື້ອໃນການສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ) ແລະ ❻ ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ);
- **ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມປະຈໍາປີ 2017 ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ທີ່ (ຫ້ອງປະຊຸມ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ), ❷ ກອງປະຊຸມວຽກງານກວດສອບງົບປະມານແຫ່ງລັດປະຈໍາປີ 2017 ທີ່ (ໂຮງແຮມດອນຈັນພາເລດ), ❸ ກອງປະຊຸມປຶກສາຫາລືກ່ຽວກັບລັດຖະບານສະຫະລັດ ອາເມລິກາປະກາດຂຶ້ນບັນຊີດໍາ ບັນດານັກທຸລະກິດ ຢູ່ເຂດເສດຖະກິດພິເສດ ສາມຫຼ່ຽມທອງຄໍາ ທີ່ (ກະຊວງການຕ່າງປະເທດ), ❹ ກອງປະຊຸມຜ່ານຮ່າງກົດໝາຍວ່າດ້ວຍ ທຫລ ຢູ່ ກອງປະຊຸມລັດຖະບານ ສະໄໝວິສາມັນ ທີ່ (ຫສນຍ) ແລະ ❺ ຈັດຕັ້ງພິທີປະກາດການຈັດຕັ້ງສະພາບໍລິຫານ ທພລ ຊຸດໃໝ່ ທີ່ (ທະນາຄານພັດທະນາລາວ);
- ຕ້ອນຮັບການເຂົ້າຢ້ຽມຢາມ ທ່ານ ຜູ້ວ່າການ ທຫລ ຈາກຫ້ອງການ AMRO ທີ່ (ທຫລ).

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ